ກະຊວງການເງິນ

# ກົມຄຸ້ມຄອງຊັບສິນຂອງລັດ
# ຫ້ອງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບຂອງ ສປປ ລາວ
# "ຫ້ອງການຈົດທະບຽນ"
# ຂໍ້ມູນແນະນໍາ

## ຫ້ອງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມມະຊັບແມ່ນຫຍັງ?

ຫ້ອງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມມະຊັບ(ຫ້ອງການຈົດທະບຽນ)ໄດ້ສ້າງຕັ້ງຂຶ້ນໃນກະຊວງການເງິນ(ກະຊວງ). ຫ້ອງການຈົດທະບຽນດ້ວຍສັງຫາລິມມະຊັບດໍາເນີນການຈົດທະບຽນດ້ວຍລະບົບຄອມພິວເຕີສູນກາງທີ່ໃຫ້ບໍລິການທົ່ວ ສປປ ລາວ. ຫ້ອງການຈົດທະບຽນອະນຸຍາດໃຫ້ບຸກຄົນ ແລະ ສະຖາບັນການເງິນຕ່າງໆ ສາມາດຈົດທະບຽນການຄໍ້າປະກັນຂອງຕົນໃນສັງຫາລິມະຊັບ (ຊັບສິນສ່ວນບຸກຄົນ, ພາຫະນະກົນຈັກ, ບັນຊີສິນຄ້າໃນສາງ, ໜີ້ຕ້ອງຮັບ, ຜົນຜະລິດ ແລະ ອື່ນໆ).

**ຕົວຢ່າງ:** ຖ້າລົດຈັກຂອງທ່ານໄດ້ນໍາເອົາໄປຄໍ້າປະກັນກັບສະຖາບັນປ່ອຍເງິນກູ້ ເພື່ອເປັນຫຼັກຊັບຄໍ້າປະກັນໃນການແລກປ່ຽນເປັນສິນເຊື່ອ, ຫຼັງຈາກນັ້ນລົດຈັກຂອງທ່ານຈະກາຍເປັນຫຼັກຊັບຄໍ້າປະກັນສໍາລັບການກູ້ຢືມເງິນຂອງທ່ານ ແລະ ຜູ້ໃຫ້ກູ້ຢືມຈະກາຍເປັນເຈົ້າໜີ້ທີ່ມີຫຼັກຊັບຄໍ້າປະກັນ ແລະ ມີຫຼັກຊັບຄໍ້າປະກັນໃນລົດຈັກຂອງທ່ານ. ຫ້ອງການຈົດທະບຽນມີຖານຂໍ້ມູນໜຶ່ງເຊິ່ງເປັນບ່ອນທີ່ສາມາດຈົດທະບຽນການຄໍ້າປະກັນໃນສັງຫາລິມະຊັບ ແລະ ສາມາດຊອກຄົ້ນການຄໍ້າປະກັນດ້ວຍສັງຫາລິມມະຊັບໄດ້.

## ຫ້ອງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມມະຊັບໃຫ້ຜົນປະໂຫຍດແນວໃດ?

**ຄວາມສະດວກສະບາຍ**: ຫ້ອງການຈົດທະບຽນໄດ້ສະໜອງການເຂົ້າເຖິງຂໍ້ມູນແບບທາງໄກຈາກຫ້ອງການ ຫຼື ເຮືອນຂອງທ່ານ. ຍັງສາມາດເຂົ້າເຖິງຂໍ້ມູນໄດ້ຢູ່ທີ່ ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ.

**ການເຂົ້າເຖິງຂໍ້ມູນທົ່ວປະເທດ**: ຫ້ອງການຈົດທະບຽນອະນຸຍາດໃຫ້ລູກຄ້າຂອງຫ້ອງການຈົດທະບຽນການຄໍ້າປະກັນ ແລະ ຊອກຄົ້ນແຈ້ງການຈົດທະບຽນທັງໝົດທີ່ໄດ້ຈົດທະບຽນໃນທົ່ວປະເທດດ້ວຍການດໍາເນີນການໃນຄັ້ງດຽວເທົ່ານັ້ນ ທີ່ເວັບໄຊ: www.mof.gov.la/str

**ການຕອບສະໜອງການບໍລິການ**: ສາມາດເຂົ້າເຖິງຫ້ອງການຈົດທະບຽນນອກຊົ່ວໂມງທາງທຸລະກິດຕາມປົກກະຕິ ຊຶ່ງຂຶ້ນກັບການບໍາລຸງຮັກສາລະບົບໂດຍທົ່ວໄປແລ້ວຫ້ອງການຈົດທະບຽນຈະໃຫ້ບໍລິການ 24ຊົ່ວໂມງຕໍ່7ວັນ.

**ການປ້ອງກັນ**: ຫ້ອງການຈົດທະບຽນສະໜອງການເຂົ້າເຖິງຂໍ້ມູນຂ່າວສານໄດ້ງ່າຍ ຊຶ່ງປັບປຸງການປ້ອງກັນສໍາລັບເຈົ້າໜີ້ ແລະ ລູກໜີ້ເພື່ອເຮັດໃຫ້ນິຕິກໍາມີປະສິດທິພາບຫຼາຍຂຶ້ນ.

ຫ້ອງການຈົດທະບຽນຄໍ້າປະກັນດ້ວຍສັງຫາລິມະຊັບ ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ.
ໂທລະສັບ/ແຟັກ: (856-21) 900905. ອີເມລ໌: reg_simp@mof.gov.la. ເວບໄຊຕ໌: www.mof.gov.la/str
Registry Office for Security Interests in Moveable Property. State Assets Management Department, Ministry of Finance.
Tel/Fax: (856-21) 900905. Email: reg_simp@mof.gov.la. Website: www.mof.gov.la/str

**ຄວາມຖືກຕ້ອງ**: ມີການສະໜອງຂໍ້ມູນໂດຍກົງໂດຍລູກຄ້າຊຶ່ງຮັບປະກັນຄວາມຖືກຕ້ອງ, ທັນເວລາ, ເຮັດໃຫ້ສາມາດຫຼຸດຜ່ອນຄວາມສ່ຽງ ແລະ ມີຄວາມຮັບຜິດຊອບໃນການບໍລິການ.

**ການຈົດທະບຽນອີງໃສ່ພື້ນຖານນິຕິກຳໃດແດ່?**

- ອີງຕາມ ກົດໝາຍວ່າດ້ວຍການຄໍ້າປະກັນການປະຕິບັດສັນຍາສະບັບເລກທີ 06/ສພຊ, ລົງວັນທີ 20 ພຶດສະພາ 2005 (ກົດໝາຍ);
- ອີງຕາມ ດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄໍ້າປະກັນການປະຕິບັດສັນຍາສະບັບ ເລກທີ 178/ນຍ, ລົງວັນທີ 20 ມິຖຸນາ 2011 (ດຳລັດ), ທີ່ຄຸ້ມຄອງການດຳເນີນວຽກງານຂອງຫ້ອງການຈົດທະບຽນ ແລະ ລະບົບຈົດທະບຽນການຄໍ້າປະກັນ. ສາມາດເຂົ້າເບິ່ງກົດໝາຍ ແລະ ລະບຽບການຈັດຕັ້ງປະຕິບັດກົດໝາຍ ທີ່ເວັບໄຊ: www.mof.gov.la/str

**ຫ້ອງການຈົດທະບຽນດຳເນີນວຽກງານແນວໃດ?**

ຫ້ອງການຈົດທະບຽນ ແມ່ນເປັນລະບົບການແຈ້ງຈົດທະບຽນທາງອິນເຕີເນັດ ຊຶ່ງບໍ່ມີເອກະສານສຳເນົາຢູ່ທີ່ຫ້ອງການທະບຽນ. ພະນັກງານຈົດທະບຽນ ຢູ່ກະຊວງການເງິນ ຈະບໍ່ໄດ້ຮັບອະນຸຍາດໃຫ້ຮັບເອົາໃບຢັ້ງຢືນຖານະການເງິນ ຊຶ່ງເອກະສານເຫຼົ່ານີ້ຈະຖືກເກັບຮັກສາໄວ້ກັບຜູ້ໃຫ້ກູ້ຢືມ/ເຈົ້າໜີ້ ເພື່ອຄວາມປອດໄພ. ຝ່າຍທີ່ມີຫຼັກຊັບຄໍ້າປະກັນ ຫຼື ຜູ້ໃຫ້ກູ້ຢືມ ແມ່ນມີຄວາມຮັບຜິດຊອບສຳລັບການພິມຂໍ້ມູນໃຫ້ຖືກຕ້ອງ ແລະ ທັນເວລາໃນລະບົບຈົດທະບຽນໃນເວລາທີ່ເຂົ້າຈົດທະບຽນ. ຫຼັງຈາກການຈົດທະບຽນແລ້ວຈະມີການອອກໃບຢັ້ງຢືນການຈົດທະບຽນໃຫ້ຜູ້ທີ່ຈົດທະບຽນ ເພື່ອຢືນຢັນລາຍລະອຽດຂອງການຄໍ້າປະກັນ. ການປ່ຽນແປງຂໍ້ມູນການຈົດທະບຽນ ແລະ ຕ້ອງມີໜັງສືແຈ້ງເປັນບົດລາຍງານການປ່ຽນແປງ ທີ່ໄດ້ສົ່ງທາງອີເມລ ຫຼື ທາງໄປສະນີໃຫ້ແກ່ຝ່າຍທີ່ມີຫຼັກຊັບຄໍ້າປະກັນທັງໝົດຕາມທີ່ຢູ່ທີ່ສະແດງຢູ່ການຈົດທະບຽນ. ນິຕິກຳກຳນົດໃຫ້ຝ່າຍທີ່ໄດ້ຮັບການຄໍ້າປະກັນເປັນຜູ້ຈ່າຍຄ່າທຳນຽມ ແລະ ເຮັດສຳເນົາສັນຍາຄໍ້າປະກັນ ເພື່ອສະໜອງໃຫ້ຜູ້ມີສິດໄດ້ຮັບ ຫຼື ສາມາດກວດສອບເອກະສານດັ່ງກ່າວໄດ້.

**ໜ້າທີ່ຂອງຫ້ອງການຈົດທະບຽນມີຫຍັງແດ່?**

ຫ້ອງການຈົດທະບຽນມີໜ້າທີ່ ລຸ່ມນີ້:

- ຈົດທະບຽນ;
- ດັດແກ້ການຈົດທະບຽນ;
- ສືບຕໍ່ການຈົດທະບຽນ;
- ຍົກເລີກການຈົດທະບຽນ;
- ຊອກຄົ້ນການຈົດທະບຽນ;
- ຢັ້ງຢືນການຈົດທະບຽນ.

ນອກຈາກນັ້ນທ່ານຍັງສາມາດປະຕິບັດການປ່ຽນແປງຂໍ້ມູນຂອງຝ່າຍທີ່ໄດ້ຮັບການຄ້ຳປະກັນ ຫຼື ເຈົ້າໜີ້ ຫຼື ການຊອກຄົ້ນຖານຂໍ້ມູນຂອງຫ້ອງການຈົດທະບຽນໂດຍຊື່ຂອງເຈົ້າໜີ້ ຫຼື ຊື່ຂອງບໍລິສັດ, ເລກປະຈຳຕົວ, ເລກຖັງ ແລະ ເລກຈົດທະບຽນ.ທ່ານຍັງສາມາດປະຕິບັດວຽກງານການບໍລິຫານຈຳນວນໜຶ່ງເພື່ອຈັດການບັນຊີຂອງທ່ານໄດ້.

**ການຈົດທະບຽນດ້ວຍສັງຫາລິມະຊັບ ແມ່ນງ່າຍດາຍສຳລັບຜູ້ນຳໃຊ້ບໍ່?**

ການຈົດທະບຽນດ້ວຍສັງຫາລິມະຊັບຂອງ ສປປ ລາວ ຖືກອອກແບບເພື່ອຄວາມງ່າຍ. ອິນເຕີເຟດຂອງຕົວນຳໃຊ້ເປັນແບບຮູບພາບທີ່ນຳໃຊ້ແບບຟອມອອນໄລຜ່ານອິນເຕີເນັດໃນການເກັບກຳຂໍ້ມູນຂ່າວສານ. ການຊ່ວຍເຫຼືອຢູ່ໜ້າຈໍ ແລະ ຄຳແນະນຳທີ່ມີໄວ້ເພື່ອຊ່ວຍປະຢັດເວລາໃນການຮຽນຮູ້ ແລະ ນຳໃຊ້ລະບົບ, ທ່ານຈະຕ້ອງໄດ້ມີການຝຶກອົບຮົມເພີ່ມເຕີມ.

**ມີການປ້ອງກັນຂໍ້ມູນຂ່າວສານບໍ່?**

ຊື່ຜູ້ນຳໃຊ້ ແລະ ລະຫັດຜ່ານແມ່ນໄດ້ກຳນົດເພື່ອສະແດງໃຫ້ເຫັນຜູ້ເຂົ້າໄປຈົດລົງທະບຽນ ຫຼື ປ່ຽນແປງການຈົດທະບຽນ.

ຫ້ອງການຈົດທະບຽນຈະຮຽກຮ້ອງໃຫ້ມີການປ່ຽນແປງລະຫັດຜ່ານແບບອັດຕະໂນມັດຢ່າງເປັນປົກະຕິ. ຂໍ້ມູນທີ່ຈົດລົງທະບຽນຢູ່ໃນຖານຂໍ້ມູນຂອງການຈົດທະບຽນອອນໄລຈະຖືກສຳເນົາໄວ້ຕະຫຼອດ ແລະ ເກັບຮັກສາໄວ້ຢູ່ສະຖານທີ່ອື່ນອີກ. ລະບົບໄດ້ສ້າງຂຶ້ນຕາມມາດຕະຖານສາກົນ ໂດຍນຳໃຊ້ລະບົບການຮັກສາຄວາມປອດໄພຕາມຂັ້ນຕອນທີ່ແນ່ນອນ.

**ຈະເຊື່ອມຕໍ່ກັບລະບົບການຈົດທະບຽນໄດ້ແນວໃດ?**

ລູກຄ້າສາມາດເຊື່ອມຕໍ່ແບບທາງໄກກັບຫ້ອງການຈົດທະບຽນໄດ້ຈາກເຮືອນ ຫຼື ຈາກສະຖານທີ່ທຸລະກິດ ໂດຍນຳໃຊ້ຄອມພິວເຕີສ່ວນຕົວຂອງຕົນ. ໃນການເຊື່ອມຕໍ່ກັບຫ້ອງການຈົດທະບຽນ, ຄອມພິວເຕີຂອງທ່ານຈະຕ້ອງມີການເຊື່ອມຕໍ່ອິນເຕີເນັດ ແລະ ຈະຕ້ອງກຳນົດຕົວປະກອບ ລຸ່ມນີ້:

ຕົວຄົ້ນຫາອິນເຕີເນັດ (Internet Web Browser) ທີ່ສະໜັບສະໜູນ:

- ພວກເຮົາແນະນຳ ແລະ ສະໜັບສະໜູນໃຫ້ນຳໃຊ້ Internet Explorer (IE) ເວີຊັນ 6.0 ຫຼື ສູງກວ່ານັ້ນ. ນອກຈາກນັ້ນຍັງຈະສາມາດນຳໃຊ້ Firefox ເວີຊັນ 2.0 ຫຼື ສູງກວ່ານັ້ນ.
- Browser ຂອງທ່ານຕ້ອງຮັບຮອງ 128 bit.
- Browser ຂອງທ່ານຕ້ອງໄດ້ກຳນົດເພື່ອໃຫ້ສາມາດຮັບຮອງ Java Script.
- Browser ຂອງທ່ານຕ້ອງໄດ້ກຳນົດເພື່ອໃຫ້ຍອມຮັບຄຸກກີ (Cookies) ຈາກ acol.ca.
- Browser ຂອງທ່ານຕ້ອງໄດ້ກຳນົດເພື່ອໃຫ້ຍອມຮັບ POP-Ups ຈາກ acol.ca.

- ໂປຼແກຼມເພື່ອອ່ານເອກະສານໃນຮູບແບບ PDF, ຕົວຢ່າງ: Adobe® Acrobat®Reader® 4.0 ຫຼື ສູງກວ່ານັ້ນ.

**ຈະຈົດທະບຽນເປັນລູກຄ້າຂອງລະບົບໄດ້ແນວໃດ?**

ໃນການເຂົ້າເຖິງການບໍລິການຈົດທະບຽນທ່ານຕ້ອງມີບັນຊີການຈົດທະບຽນ ເພື່ອເຂົ້າເຖິງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມມະຊັບ ເພື່ອໄດ້ຮັບບັນຊີທ່ານຕ້ອງຕື່ມຂໍ້ມູນໃສ່ເອກະສານໃບຄໍາຮ້ອງຂອງລູກຄ້າທີ່ມີຢູ່ໃນເວັບໄຊ ດັ່ງນີ້: www.mof.gov.la/str ຫຼື ໄປທີ່ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ຊຶ່ງຕັ້ງຢູ່ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ເພື່ອໄປເອົາເອກະສານທີ່ຈໍາເປັນ. ຫຼັງຈາກນັ້ນໃຫ້ສົ່ງແບບຟອມທີ່ປະກອບຮຽບຮ້ອຍແລ້ວຄືນ ແລະ ຈ່າຍຄ່າບໍລິການໃນເບື້ອງຕົ້ນໃຫ້ແກ່ກະຊວງການເງິນເພື່ອເປັນຄ່າດໍາເນີນການ.

ເມື່ອຄໍາຮ້ອງຂອງທ່ານໄດ້ຖືກຮັບຮອງແລ້ວ ຫ້ອງການທະບຽນຈະສ້າງບັນຊີຜູ້ບໍລິຫານຕົ້ນຕໍ ແລະ ຊື່ຜູ້ນໍາໃຊ້ທີ່ມີສິດເຂົ້າເຖິງການຈົດທະບຽນ ທີ່ກໍານົດໂດຍທ່ານສໍາລັບບຸກຄົນທີ່ຖືກກໍານົດໂດຍບໍລິສັດຂອງທ່ານ. ລູກຄ້າແຕ່ລະຄົນຈະໄດ້ຮັບໜັງສືຕ້ອນຮັບພ້ອມກັບຊື່ຜູ້ນໍາໃຊ້ລະບົບຂອງທ່ານ ແລະ ຊື່ເລີ່ມຕົ້ນ, ລະຫັດຜ່ານຊົ່ວຄາວເພື່ອໃຫ້ສາມາດເຂົ້າເຖິງລະບົບ.

ໃນຂະນະທີ່ການເຊື່ອມຕໍ່ກັບລະບົບການຈົດທະບຽນໄດ້ຖືກອອກແບບມາໃຫ້ຜູ້ນໍາໃຊ້ສາມາດນໍາໃຊ້ໄດ້ສະດວກ ແລະ ງ່າຍດາຍພວກເຮົາຍັງມີການບໍລິການໂທລະສັບຈາກຫ້ອງການຈົດທະບຽນ ເພື່ອຊ່ວຍແກ້ໄຂບັນຫາດ້ານເຕັກນິກ. ພ້ອມກັນນັ້ນຍັງມີການຊ່ວຍເຫຼືອແບບອອນໄລ ພາຍໃນເວັບໄຊຂອງການຈົດທະບຽນໄດ້ທີ່ເວັບໄຊ: www.mof.gov.la/str

**ຖ້າມີຂໍ້ສົງໄສ?**

ຖ້າຕ້ອງຂໍ້ມູນເພີ່ມຕື່ມໃຫ້ເຂົ້າເວັບໄຊ ຂອງຫ້ອງການຈົດທະບຽນ ຫຼື ຕິດຕໍ່ຫາສູນບໍລິການລູກຄ້າຂອງຫ້ອງຈົດທະບຽນ ທີ່ເບີໂທ: (856) 21 900 905 ເວັບໄຊຂອງຫ້ອງການຈົດທະບຽນ: www.mof.gov.la/str ຫຼື ໄປທີ່ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ.